ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

...........................

ກະຊວງປ້ອງກັນຄວາມສະຫງົບ

ກອງບັນຊາການ ປກສ ນວ

ເລກທີ 112 / ປກສ.ນວ

ວັນທີ 22 ມີນາ 2018

# ແຈ້ງການ

**ຮຽນ :** ສໍານັກງານ, ອົງການ, ກຸ່ມບ້ານ, ຫົວໜ່ວຍທຸລະກິດ, ຈັດຕັ້ງສາກົນ, ພະນັກງານ, ລັດຖະກອນ, ທະຫານ, ຕໍາຫຼວດ, ພໍ່ແມ່ປະຊາຊົນ, ຊາວຕ່າງປະເທດ ທີ່ມາເຄື່ອນໄຫວດໍາລົງຊີວິດຢູ່ນະຄອນຫຼວງວຽງຈັນ.

**ເລື່ອງ :** ການເພີ່ມທະວີວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນໄລຍະງານສະເຫຼີມສະຫຼອງບຸນປີໃໝ່ລາວ ພສ 2561. ຄສ 2018.

- ອີງຕາມຄໍາສັ່ງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0002 / ຈນວ, ລົງວັນທີ 21 ມີນາ 2018 ວ່າດ້ວຍການຮັກສາຄວາມເປັນລະບຽບຮຽບຮ້ອຍໃນການຈັດງານສົ່ງທ້າຍປີເກົ່າ ພສ 2560 ແລະ ຕ້ອນຮັບປີໃໝ່ ພສ 2561 ຢູ່ນະຄອນຫຼວງວຽງຈັນ.
- ອີງຕາມທິດຊີ້ນໍາຂອງຄະນະພັກ, ຄະນະກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ໃນຄັ້ງວັນທີ 14 ມີນາ 2018 ເພື່ອເຮັດໃຫ້ການສະເຫຼີມສະຫຼອງບຸນປີໃໝ່ລາວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ.

ເພື່ອຮັບປະກັນໃຫ້ແກ່ການສະເຫຼີມສະຫຼອງບຸນປີໃໝ່ລາວ ພສ 2561 ນັບແຕ່ວັນທີ **14 - 16 ເມສາ 2018** ທີ່ຈະມາເຖິງນີ້ເປັນໂອກາດໜຶ່ງທີ່ສໍາຄັນໃນການສືບຕໍ່ເສີມຂະຫຍາຍມູນເຊື້ອຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງຊາດທີ່ມີມາແຕ່ດົນນານແລ້ວ, ເປັນບຸນໃຫຍ່ປະຈໍາຊາດທີ່ປວງຊົນລາວທັງຊາດຖືເອົາໂອກາດນີ້ອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ຈັດຕັ້ງສະເຫຼີມສະຫຼອງດ້ວຍບັນຍາກາດເບີກບານມ່ວນຊື່ນ, ຕິດພັນກັບການສົ່ງເສີມການທ່ອງທ່ຽວໃນປີທ່ອງທ່ຽວລາວ, ບົນຈິດໃຈປະຫຍັດມັດທະຍັດທັງຮັບປະກັນໄດ້ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດຈົບງາມ.

**ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ ຈຶ່ງໄດ້ອອກແຈ້ງການດັ່ງນີ້ :**

## 1. ບັນດາຂໍ້ແນະນໍາ :

**1.1.** ແຕ່ລະຄົນ, ແຕ່ລະຄອບຄົວ, ແຕ່ລະບ້ານ, ສໍານັກງານອົງການ, ໂຮງຈັກ, ໂຮງງານ, ໂຮງຮຽນ ໂຮງໝໍ, ເລົ້າສາງ, ກົມກອງທະຫານ, ກົມກອງຕໍາຫຼວດ, ການຈັດຕັ້ງສາກົນ ແລະ ການຈັດຕັ້ງສັງຄົມໃຫ້ມີສະຕິເຄົາ

ລິບ ແລະ ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ເຂົ້າຮ່ວມຕາມແຈ້ງການທີ່ອຳນາດການປົກຄອງວາງອອກຢ່າງເຂັ້ມງວດ.

**1.2.** ຍົກສູງສະຕິລະວັງຕົວ, ປົກປັກຮັກສາຊັບສົມບັດຂອງຕົນໃຫ້ດີ, ມີສະຕິໃນການກວດກາຟືນໄຟຢູ່ຕາມສະຖານທີ່ເຮືອນຊານ, ບ່ອນອາໄສເພື່ອຮັບປະກັນສາເຫດຊ່ອງຫວ່າງພາໃຫ້ເກີດອັກຄີໄພ ຫຼື ພວກກຸ່ມຄົນບໍ່ດີສວຍໂອກາດເຄື່ອນໄຫວກໍ່ອາດຊະຍາກຳ ( ປຸ້ນຈີ້, ຊິງຊັບ, ລັກຊັບ ແລະ ອື່ນໆ )

**1.3.** ເອົາໃຈໃສ່ເຮັດໜ້າທີ່ປ້ອງກັນເວນຍາມສຳນັກງານ - ອົງການ, ກຸ່ມບ້ານ, ກວດກາລາດຕະເວນແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ, ຮັບປະກັນຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ພາຍໃນເຂດຄວບຄຸມຂອງຕົນ.

**1.4.** ເປັນເຈົ້າການມີສະຕິເຄົາລົບ ແລະ ປະຕິບັດຕາມກົດລະບຽບຈະລາຈອນຢ່າງເຂັ້ມງວດ.

## 2. ບັນດາຂໍ້ຫ້າມຕ່າງໆ :

**2.1.** ຫ້າມບໍ່ໃຫ້ຂາຍສິນຄ້າ ແລະ ອຸປະກອນທີ່ກໍ່ໃຫ້ເກີດສຽງແຕກ, ສຽງດັງທຸກປະເພດ, ບໍ່ໃຫ້ຈູດໝາກກະໂພກ, ບັ້ງໄຟດອກທຸກຊະນິດ, ບໍ່ໃຫ້ນຳໃຊ້ທາດລະເບີດ, ທາດແຕກ, ທາດເບື່ອເຄມີ, ທາດກຳມະລັງສີ ແລະ ວັດຖຸອອກລິດຕໍ່ສຸຂະພາບຈິດ, ເປັນຜົນລົບຕໍ່ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.

**2.2.** ຫ້າມບໍ່ໃຫ້ໃຊ້ນ້ຳເປິເປື້ອນ, ນ້ຳສີ, ນ້ຳຄັນຄາຍ, ນ້ຳກ້ອນໃສ່ຖົງຢາງຫົດ - ແກ່ວງໃສ່ກັນ, ບໍ່ໃຫ້ນຸ່ງເຄື່ອງສັ້ນ - ເຂັນ - ຮັດຮູບ ທີ່ເປັນການຍົ້ວຍຸ ບໍ່ຖືກຕາມຮີດຄອງປະເພນີ, ຫຼິ້ນທ່ຽວແບບລາມົກອານາຈານ ແລະ ຫຼິ້ນການພະນັນທຸກປະເພດຢ່າງເດັດຂາດ

**2.3.** ບັນດາຮ້ານທຸລະກິດບັນເທີງ - ກິນດື່ມ ຕ້ອງບໍລິການບໍ່ເກີນ ເວລາ 23 : 00 ໂມງ ຕ້ອງຢຸດເຊົາຢ່າງເດັດຂາດ.

**2.4.** ເດັດຂາດບໍ່ໃຫ້ລົງຫຼິ້ນຢູ່ຫາດຊາຍ, ນ້ຳຂອງ ທີ່ບໍ່ໄດ້ຮັບອະນຸຍາດຈາກທາງການ ຫຼື ບ່ອນທີ່ບໍ່ມີເຈົ້າໜ້າທີ່ປ້ອງກັນຮັກສາຄວາມສະຫງົບ, ຮັກສາຄວາມປອດໄພ, ທັງນີ້ເພື່ອຫຼີກລ້ຽງຕໍ່ສິ່ງທີ່ບໍ່ເພິ່ງປາຖະໜາອາດຈະເກີດຂຶ້ນ.

**2.5.** ຫ້າມຂີ່ລົດເປັນພົງເປັນແພ, ແລ່ນລົດໄວເກີນຂອບເຂດ, ເປີດເຄື່ອງສຽງດັງເກີນຂອບເຂດ, ເວລາຂັບຂີ່ພາຫະນະປະເພດຕ່າງໆສັນຈອນຕາມທ້ອງຖະໜົນ, ຜູ້ຂັບຂີ່ຕ້ອງປະຕິບັດຕາມຄຳຂວັນຂອງອົງການປົກຄອງນະຄອນຫຼວງວຽງຈັນ **" ດື່ມບໍ່ຂັບ - ຂັບບໍ່ດື່ມ "** ແນ່ໃສ່ໃຫ້ງານບຸນປີນີ້ມີຄວາມສະຫງົບ - ປອດໄພ.

- ຫ້າມດື່ມສິ່ງມຶນເມົາແລ້ວ ຂັບຂີ່ພາຫະນະທຸກປະເພດຕາມທ້ອງຖະໜົນ.
- ຫ້າມຜູ້ໂດຍສານນັ່ງຫົວລົດເວລາຂັບຂີ່ໄປຕາມທ້ອງຖະໜົນ.
- ການຂັບຂີ່ພາຫະນະທຸກປະເພດໃຫ້ປະຕິບັດຕາມປ້າຍສັນຍານຈະລາຈອນຢ່າງເຄັ່ງຄັດ.
- ຫ້າມລົດບັນທຸກຂົນສົ່ງສິນຄ້າໜັກ ແລະ ລົດໂດຍສານໃສ່ເກີນກຳນົດ.

**2.6.** ຫ້າມໃຊ້ພາຫະນະບັນຈຸຖັງນ້ຳ, ຖົງນ້ຳເລາະຫົດຕາມເສັ້ນທາງຕ່າງໆ.

**2.7.** ຫ້າມຫຼິ້ນນ້ຳເປັນກຸ່ມ, ເຕັ້ນຢູ່ຕາມທ້ອງຖະໜົນຫຼວງເດັດຂາດ, ຫ້າມໃຊ້ທໍ່ຢາງຕໍ່ນ້ຳອອກຈາກເຮືອນເພື່ອຫົດນ້ຳຕາມທ້ອງຖະໜົນຢ່າງເດັດຂາດ.

**2.8.** ຫ້າມຫົດນ້ຳໃສ່ເຈົ້າໜ້າທີ່ໆກຳລັງປະຕິບັດໜ້າທີ່ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມເສັ້ນທາງ ແລະ ສະຖານທີ່ຕ່າງໆ.

## 3. ມາດຕະການຕໍ່ຜູ້ລະເມີດ.

ທຸກການກະທຳທີ່ຖືວ່າເປັນການລະເມີດຂໍ້ຫ້າມໃນແຈ້ງການສະບັບນີ້, ດ້ວຍເຈດຕະນາ ຫຼື ບໍ່ເຈດຕະ

ນາລ້ອນແຕ່ໄດ້ຖືກສຶກສາອົບຮົມ, ກ່າວເຕືອນ ຫຼື ປັບໃໝຕາມຄວາມເໝາະສົມກັບສະຖານການລະເມີດຝືນຄື້ ຂອງບຸກຄົນ, ກຸ່ມຄົນ ແລະ ນິຕິບຸກຄົນ.

## 4. ມາດຕະການຈັດຕັ້ງປະຕິບັດ.

**4.1.** ມອບໃຫ້ກອງບັນຊາການ ປກສ ເມືອງ 09 ຕົວເມືອງ, ບັນດາຫ້ອງວິຊາສະເພາະ, ຄ້າຍຄຸມຂັງ - ດັດສ້າງ, ກອງພັນປ້ອງກັນເຄື່ອນທີ່ ເພີ່ມທະວີໃນການໂຄສະນາ, ປະຊາສຳພັນໃນກຳລັງປ້ອງກັນຄວາມສະຫງົບ ໃຫ້ເຂົ້າໃຈຕໍ່ແຈ້ງການ ແລະ ຖືເປັນມາດຕະການຄວບຄຸມການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ພສ 2561 ໃຫ້ດຳເນີນໄປດ້ວຍບັນຍາກາດເບີກບານມ່ວນຊື່ນ, ສະຫງົບ ແລະ ປອດໄພ.

**4.2.** ກອງບັນຊາການ ປກສ ເມືອງ 09 ຕົວເມືອງ ຕ້ອງໄດ້ນຳເອົາເນື້ອໃນແຈ້ງການສະບັບນີ້ລົງໄປສົມທົບ ແລະ ຈັດຕັ້ງຜັນຂະຫຍາຍສູ່ໂຮງຈັກ, ໂຮງງານ, ສະຖານທີ່ບັນເທີງ, ຈຸດຊຸມນຸມຊົນ, ຮາກຖານບ້ານໃຫ້ຮັບຮູ້, ເຊື່ອມຊຶມ ແລະ ຕື່ນຕົວເຂົ້າຮ່ວມປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າກອງບັນຊາການ ປກສ ນະຄອນຫຼວງວຽງຈັນ**

ພົຈວ ບຸບຜາ ສີພົມມາ
BG. Bouppha SIPHOMMA